Lao Version

# ການວາງແຜນ, ງົບປະມານ ແລະ ການເງິນ

ກິດຈະກຳການຟື້ນຟູແລະກໍ່ສ້າງຄືນໃໝ່ຫຼັງໄພພິບັດ

ໃນແຂວງຄຳມ່ວນ, ສປປລາວ

ພັດທະນາພາຍໃຕ້ໂຄງການພັດທະນາແຂວງຄຳມ່ວນ,
ຈັດຕັ້ງປະຕິບັດໂດຍພະແນກແຜນການແລະການລົງທຶນ, ທ່າແຂກ, ແຂວງຄຳມ່ວນ

adpc

# ສາລະບານ

ພາກສະເໜີ 2

ເປົ້າໝາຍຂອງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ 2

ໄລຍະເວລາ ສໍາລັບການພັດທະນາແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ 3

ການພັດທະນາແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ (ແຜນການ) 3

ບາດກ້າວທີ 1: ດໍາເນີນການວາງແຜນຍຸດທະສາດ ສໍາລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ 4

ບາດກ້າວທີ 2: ການກໍານົດຊັບພະຍາກອນຕ່າງໆ ທີ່ສາມາດລົງທຶນໃສ່ຄວາມຕ້ອງການທີ່ເປັນບູລິມະສິດພາຍຫລັງເກີດໄພພິບັດ 6

ບາດກ້າວທີ 3: ສ້າງຄວາມເຂັ້ມແຂງເງື່ອນໄຂທາງດ້ານການເງິນຂອງຄວາມຕ້ອງການທີ່ເປັນບູລິມະສິດ ແລະ ສະເໜີແຫລ່ງທຶນ 8

ບາດກ້າວທີ 4: ກໍານົດໂຄງຮ່າງອັນເໝາະສົມ ສໍາລັບການຈັດຕັ້ງປະຕິບັດແຜນການຟື້ນຟູ 10

ບາດກ້າວທີ 5: ການຮ່າງແຜນ 11

ບາດກ້າວທີ 6: ຂອກຫາການອະນຸມັດແຜນຈາກອໍານາດການປົກຄອງແຂວງ ແລະ ແຈກຢາຍແຜນການ 13

# ພາກສະເໜີ

ທັນທີ ທີ່ພາຍຫລັງທາງແຂວງ ໄດ້ຮັບຜົນກະທົບຈາກເຫດການໄພພິບັດ, ການຊ່ວຍເຫລືອດ້ານມະນຸດສະທຳ ຈະເປັນສິ່ງທຳອິດທີ່ຕ້ອງໄດ້ສຸມໃສ່. ການຟື້ນຟູເບື້ອງຕົ້ນແມ່ນຈະຕ້ອງໄດ້ຮັບການປະຕິບັດທັນທີ ພາຍຫລັງເຫດການໄດ້ກັບຄືນສູ່ສະພາບປົກກະຕິ ແລະ ໂດຍທົ່ວໄປແມ່ນເນັ້ນໃສ່ການສະໜອງຄວາມຕ້ອງການການຟື້ນຟູແລະກໍ່ສ້າງຄືນໃໝ່ໄປເລື້ອຍໆ ຈາກໄລຍະກາງຈົນເຖິງໄລຍະຍາວ. ການຟື້ນຟູພາຍຫລັງໄພພິບັດ ແມ່ນກ່ຽວກັບການສ້າງການບໍລິການຂັ້ນພື້ນຖານຄືນໃໝ່ເພື່ອເຮັດໃຫ້ເງື່ອນໄຂດ້ານເສດຖະກິດ - ສັງຄົມຢູ່ເຂດທີ່ໄດ້ຮັບຜົນກະທົບກັບຄືສູ່ສະພາບປົກກະຕິ ລວມທັງການຊອກຫາແຫລ່ງທຶນສຳລັບການລົງທຶນເຂົ້າໃນການກໍ່ສ້າງຄືນໃໝ່ໃນໄລຍະຍາວ. ດ້ວຍເຫດຜົນດັ່ງກ່າວ, ແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ (ແຜນການ) ຕ້ອງຕອບສະໜອງໃຫ້ແກ່ຄວາມຕ້ອງການ ທີ່ໄດ້ຮັບການກຳນົດຂຶ້ນ ແລະ ບູລິມະສິດຕ່າງໆ ຄວນພະຍາຍາມຫລີກລ້ຽງຄວາມຫລ້າຊ້າ ລະຫວ່າງໄລຍະການຕອບໂຕ້ໄພພິບັດ ແລະ ໄລຍະການຟື້ນຟູ ແລະ ກໍ່ສ້າງຄືນໃໝ່. ຂະບວນການວາງແຜນ ແລະ ການຈັດຕັ້ງປະຕິບັດໂຄງການອັນຮີບດ່ວນ ຕ້ອງໄດ້ຮັບໝາກຜົນຢ່າງທັນການ, ມີປະສິດທິພາບ ພ້ອມທັງມີຄວາມໂປ່ງໃສ ແລະ ມີຄວາມຮັບຜິດຊອບຈາກທຸກຂະແໜງການທີ່ກ່ຽວຂ້ອງ.

ປຶ້ມແນະນຳສະບັບນີ້ ແມ່ນມີຈຸດປະສົງເພື່ອໃຫ້ແຂວງຄຳມ່ວນ, ສປປລາວ ນຳໃຊ້ເຂົ້າໃນການສ້າງແຜນການຟື້ນຟູພາຍຫລັງເກີດໄພພິບັດ ທີ່ພົວພັນເຖິງກອງທຶນຟື້ນຟູພາຍຫລັງເກີດໄພພິບັດ ພາຍໃຕ້ແຜນງານພັດທະນາແຂວງຄຳມ່ວນ.

# ເປົ້າໝາຍຂອງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່

ເປົ້າໝາຍຂອງການສ້າງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ແມ່ນມີດັ່ງລຸ່ມນີ້:

- ເພື່ອສະໜອງແຜນວຽກໃຫ້ແກ່ແຂວງຄຳມ່ວນ ໃນການຂ້າມຜ່ານຈາກການບັນເທົາທຸກສຸກເສີນ ແລະ ການຟື້ນຟູເບື້ອງຕົ້ນໃຫ້ດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ, ເພື່ອນຳໄປສູ່ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ໃນໄລຍະກາງ ແລະ ໄລຍະຍາວ.
- ເພື່ອສະເໜີຍຸດທະສາດການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ແລະ ນຳສະເໜີບັນດາກິດຈະກຳ ແລະ ຜົນໄດ້ຮັບຕ່າງໆ ສຳລັບແຕ່ລະຂະແໜງການຫລັກທີ່ໄດ້ຮັບຜົນກະທົບ.
- ເພື່ອສະເໜີຮູບແບບການຈັດຕັ້ງປະຕິບັດດ້ານການປະສານງານ ແລະ ຕິດຕາມການຟື້ນຟູ ແລະ ກໍ່ສ້າງຄືນໃໝ່.
- ເພື່ອສະໜອງແຜນວຽກທີ່ມີຂໍ້ມູນຢ່າງພຽງພໍ ແລະ ລາຍລະອຽດຂອງສະຖານະພາບ ແລະ ຄວາມຕ້ອງການ (ອີງຕາມການປະເມີນ ຄວາມເສຍຫາຍ, ການສູນເສຍ, ແລະ ຄວາມຕ້ອງການ), ເພື່ອເຮັດໃຫ້ຄູ່ຮ່ວມພັດທະນາສາມາດສະໜັບສະໜູນຄວາມຕ້ອງການໃນໄລຍະກາງ ແລະ ໄລຍະຍາວຂອງຜູ້ທີ່ປະສົບເຫດການໄພພິບັດ.

# ໄລຍະເວລາສຳລັບການສ້າງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່

- ແຜນການຟື້ນຟູ ແລະກໍ່ສ້າງຄືນໃໝ່ຈະໄດ້ຮັບການສ້າງຂຶ້ນພາຍຫລັງການປະເມີນ ຄວາມເສຍຫາຍ, ການສູນເສຍ ແລະຄວາມຕ້ອງການ ແລະບົດລາຍງານການປະເມີນດັ່ງກ່າວໄດ້ຮັບການອະນຸມັດ ໂດຍຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງ (ຄປຄພບຂ). ບົດລາຍງານການປະເມີນ ຄວາມເສຍຫາຍ, ການສູນເສຍ, ແລະ ຄວາມຕ້ອງການທີ່ໄດ້ຮັບອະນຸມັດຈະເປັນພື້ນຖານໃຫ້ແກ່ການສ້າງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່.
- ເພື່ອໃຫ້ມີຄວາມເໝາະສົມທີ່ສຸດ, ແຜນການດັ່ງກ່າວຄວນສຳເລັດຢ່າງສົມບູນ ພາຍໃນ 2-3ອາທິດ ພາຍຫລັງທີ່ບົດລາຍງານການປະເມີນ ຄວາມເສຍຫາຍ, ການສູນເສຍ, ແລະ ຄວາມຕ້ອງການໄດ້ຮັບການອະນຸມັດ.

# ການສ້າງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ (ແຜນການ)

ບົດລາຍງານການປະເມີນຄວາມເສຍຫາຍ, ການສູນເສຍ, ແລະ ຄວາມຕ້ອງການ ໄດ້ຮັບການອະນຸມັດ ໂດຍຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງ (ຄປຄພບຂ) ຈະເປັນພື້ນຖານໃຫ້ແກ່ແຜນການ. ຂະບວນການພັດທະນາແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ຈະເລີ່ມຕົ້ນ ແລະ ຈະປະກອບດ້ວຍບັນດາບາດກ້າວທີ່ວໄປດັ່ງລຸ່ມນີ້:

## ບາດກ້າວທີ 1
# ດຳເນີນການວາງແຜນຍຸດທະສາດສຳລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່

ທິດທາງຍຸດທະສາດຈະໄດ້ຮັບການກຳນົດຂຶ້ນເປັນບາດກ້າວທຳອິດ ເພື່ອແນະນຳກ່ຽວກັບຂະບວນການຟື້ນຟູ ແລະກໍ່ສ້າງຄືນໃໝ່. ທິດທາງຍຸດທະສາດນີ້ຈະປະກອບດ້ວຍຄວາມກ່ຽວເນື່ອງ ດ້ານວິໄສທັດ, ຈຸດປະສົງຕ່າງໆ, ບັນດາຍຸດທະສາດ ແລະ ຫລັກການໃຫ້ຄຳແນະນຳສຳລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ສະເພາະ. ການກຳນົດທິດທາງຍຸດທະສາດຕ້ອງປະຕິບັດຕາມຄຳແນະນຳດັ່ງລຸ່ມນີ້:

- ຜົນໄດ້ຮັບຂອງການປະເມີນຄວາມເສຍຫາຍ, ການສູນເສຍ, ແລະ ຄວາມຕ້ອງການ ໂດຍລະອຽດໃນບົດລາຍງານທີ່ໄດ້ຮັບການອະນຸມັດ ໂດຍ ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງ (ຄປຄພບຂ). (ເພື່ອອະທິບາຍເພີ່ມເຕີມ, ກະລຸນາອີງໃສ່ບົດແນະນຳ ການປະເມີນຄວາມເສຍຫາຍ ການສູນເສຍ, ແລະ ຄວາມຕ້ອງການ).
- ເຂົ້າຮ່ວມການໃຫ້ຄຳປຶກສາ ລະຫວ່າງ ບັນດາພະແນກການຕ່າງໆຂອງແຂວງ, ຜູ້ຕາງໜ້າຂອງເມືອງຕ່າງໆ ແລະ ຂອງຄູ່ຮ່ວມພັດທະນາ ເພື່ອປຶກສາເຖິງຄວາມຕ້ອງການ, ຂອດເຂດເວລາ ແລະ ປະເພດການສະໜັບສະໜູນທີ່ຕ້ອງການ ສຳລັບ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່.
- ການໃຫ້ຄຳປຶກສາຜ່ານຂະບວນການແບບມີສ່ວນຮ່ວມ ກັບຂະແໜງການຕ່າງໆ ຂອງຜູ້ໄດ້ຮັບຜົນກະທົບ ເຊັ່ນ: ແມ່ຍິງ, ຜູ້ຊາຍ, ຜູ້ເຖົ້າຜູ້ແກ່, ເດັກນ້ອຍ, ຊົນເຜົ່າ ແລະ ອື່ນໆ. ລວມທັງປຶກສາກັບບັນດາອົງການຈັດຕັ້ງຕ່າງໆ ທີ່ເຂົ້າຮ່ວມໃນການສະໜັບສະໜູນການຟື້ນຟູເບື້ອງຕົ້ນ, ເພື່ອໃຫ້ມີຄວາມເຂົ້າໃຈ ກ່ຽວກັບຄວາມຕ້ອງການໃນໄລຍະກາງ ແລະ ໄລຍະຍາວ.
- ບັນດາວິໄສທັດ, ຈຸດປະສົງ, ຍຸດທະສາດ ແລະ ຫລັກການຄຳແນະນຳ ຄວນໄດ້ຮັບການອະນຸມັດໂດຍປະທານຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຂວງ (ຄປຄພບຂ).

### ການກຳນົດວິໄສທັດ:

- ຈຸດປະສົງຂອງການກຳນົດວິໄສທັດ ແມ່ນເພື່ອໃຫ້ກາຍເປັນຄຳແນະນຳໃຫ້ແກ່ຜູ້ມີອຳນາດຕັດສິນໃຈ ແລະ ການສະໜອງແຜນວຽກໂດຍລວມຈຳນວນໜຶ່ງ ທີ່ຢູ່ພາຍໃຕ້ການຕັດສິນໃຈດັ່ງກ່າວຈະໄດ້ຮັບການປະຕິບັດ. ບົດສະເໜີກ່ຽວກັບວິໄສທັດຕ້ອງມີຄວາມຈະແຈ້ງ, ແຕ່ມີລັກສະນະ ທີ່ສະແດງໃຫ້ເຫັນຜົນກະທົບດ້ານບວກຂອງແຜນການ ທີ່ມີຕໍ່ພົນລະເມືອງຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ.
- ວິໄສທັດດັ່ງກ່າວຄວນຈະສອດຄ່ອງກັບວິໄສທັດການພັດທະນາໃນໄລຍະຍາວຂອງແຂວງ
- ວິໄສທັດຄວນຈະມີກຳນົດເວລາການສິ້ນສຸດການຟື້ນຟູ ແລະ ກໍ່ສ້າງຄືນໃໝ່, ໃຫ້ເວົ້າວ່າພາຍໃນ 3 ປີ ຫລື 5 ປີ ຫລື ອື່ນໆ.
- ການກຳນົດວິໄສທັດຄວນມີເປົ້າໝາຍນຳໄປສູ່ການຫລຸດຜ່ອນຄວາມສ່ຽງໄພພິບັດໃນໄລຍະຍາວ.

## ຂອບເຂດເວລາຂອງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່:

- ຂອບເຂດເວລາຂອງແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ຂຶ້ນກັບຂະໜາດຂອງໄພພິບັດ ແລະ ຄວາມຕ້ອງການ ແລະ ສາມາດກຳນົດຈາກ 3 ເຖິງ 5 ປີ. ບົດລາຍງານການປະເມີນ ຄວາມເສຍຫາຍ, ຄວາມສູນເສຍ, ແລະ ຄວາມຕ້ອງການ ຄວນຊີ້ໃຫ້ເຫັນໄລຍະເວລາຂອງແຜນ ການດັ່ງກ່າວ.
- ແຜນການທີ່ກຳນົດຄວນຊີ້ໃຫ້ເຫັນຂອບເຂດວຽກ ສຳລັບ ການກຳນົດບູລິມະສິດ ແລະ ການແກ້ໄຂ ບັນຫາຂອງແຜນງານ ແລະ ການກຳນົດຊັບພະຍາກອນຕ່າງໆ ແລະ ຄວນມີໜ່ວຍງານການຕິດຕາມ ທີ່ມີປະສິດທິຜົນ ທີ່ອີງໃສ່ລະບົບການຕິດຕາມ ແລະ ປະເມີນຜົນທີ່ມີໃນປັດຈຸບັນຂອງແຂວງ. ວິທີການກຳນົດບູລິມະສິດທີ່ນຳໃຊ້ເຂົ້າໃນການກຳນົດຄວາມຕ້ອງການ ໃນບົດລາຍງານ ການປະເມີນ ຄວາມເສຍຫາຍ, ການສູນເສຍ, ແລະ ຄວາມຕ້ອງການ ສາມາດນຳໃຊ້ເຂົ້າໃນແຜນດັ່ງກ່າວ.

## ການກຳນົດຈຸດປະສົງຂອງການຟື້ນຟູ ແລະ ກໍ່ສ້າງຄືນໃໝ່:

- ຈຸດປະສົງຄວນອີງໃສ່ການວິໄຈຜົນກະທົບທີ່ມີຢູ່ໃນບົດລາຍງານການປະເມີນ ຄວາມເສຍຫາຍ ການສູນເສຍ, ແລະ ຄວາມຕ້ອງການ ແລະ ວິໄສທັດທີ່ຖືກຮັບຮອງ ສຳລັບ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່. ໂດຍອີງໃສ່ຂະແໜງການຕ່າງໆທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ຄວາມຕ້ອງການຕ່າງໆ ທີ່ໄດ້ຮັບການນກຳນົດດ້ານເສດຖະກິດລວມທັງການຟື້ນຟູດ້ານມະນຸດສະທຳ, ຈຸດປະສົງທົ່ວໄປສາມາດລວມເອົາ:
- ຟື້ນຟູຊີວິດການເປັນຢູ່ຂອງຊຸມຊົນທີ່ໄດ້ຮັບຜົນກະທົບໃຫ້ມີມາດຕະຖານການກັບຄືນສູ່ສະພາບເດີມທີ່ດີກວ່າເກົ່າ.
- ການຟື້ນຟູດ້ານເສດຖະກິດຜ່ານການຟື້ນຟູການດຳລົງຊີວິດຂອງຊຸມຊົນໃຫ້ກັບຄືນສູ່ສະພາບເດີມ, ປັບປຸງຂະແໜງເສດຖະກິດທີ່ສຳຄັນໃຫ້ກັບຄືນມາໃໝ່ ແລະ ການຮັກສາຄວາມໝັ້ນຄົງ ດ້ານເສດຖະກິດ-ສັງຄົມຂອງແຂວງ
- ກໍ່ສ້າງການບໍລິການສາທາລະນະ ແລະ ພື້ນຖານໂຄງຮ່າງໃຫ້ມີຄວາມປອດໄພຍິ່ງກວ່າເກົ່າ.
- ປ້ອງກັນສະພາບແວດລ້ອມເພື່ອເຮັດໃຫ້ການພັດທະນາມີຄວາມຍືນຍົງ ແລະ ຫລຸດຜ່ອນໄພພິບັດ

## ການກຳນົດຍຸດທະສາດ ສຳລັບ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່:

- ຍຸດທະສາດຕ່າງໆສາມາດກຳນົດໃນສອງລະດັບ: ຍຸດທະສາດລວມ ສຳລັບ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ແລະ ຍຸດທະສາດຂະແໜງການສະເພາະ ສຳລັບ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່. ຍຸດທະສາດລວມສາມາດລວມເອົາຕົວຢ່າງຕ່າງໆ ເຊັ່ນ: ສ້າງກໍ່ຄືນໃໝ່ໃຫ້ດີກວ່າເກົ່າສາມາດຕ້ານທານກັບໄພພິບັດ ຫລື ການຟື້ນຟູໃຫ້ສາມາດຕ້ານທານກັບໄພພິບັດ ໂດຍຜ່ານມາດຕະການທີ່ເປັນໂຄງສ້າງແລະ ບໍ່ເປັນໂຄງສ້າງ ແລະ ອື່ນໆ.
- ຍຸດທະສາດຂະແໜງການສະເພາະຈະຂຶ້ນກັບຈຸດພິເສດຂອງຂະແໜງການດັ່ງກ່າວ ແລະປະເພດຂອງຜົນກະທົບ. ຍຸດທະສາດເຫລົ່ານີ້ມີເປົ້າໝາຍຟື້ນຟູຂະແໜງການ ຄວນຈະປະກົດຢູ່ໃນບົດລາຍງານການປະເມີນ ຄວາມເສຍຫາຍ ແລະ ຄວາມຕ້ອງການ.

# ບາດກ້າວທີ 2
# ການກຳນົດຊັບພະຍາກອນຕ່າງໆ ທີ່ສາມາດລົງທຶນໃສ່ ຄວາມຕ້ອງການທີ່ເປັນບູລິມະສິດພາຍຫລັງເກີດໄພພິບັດ (ແຜນການເງິນ)

ເພື່ອເຮັດໃຫ້ການຟື້ນຟູພາຍຫລັງເກີດໄພພິບັດເຮັດໄດ້ໄວ, ແຂວງຄຳມ່ວນ ຕ້ອງກຳນົດຊັບພະຍາກອນດ້ານການເງິນທັງໝົດທີ່ເປັນໄປໄດ້ ສຳລັບ ນຳໃຊ້ເຂົ້າໃນຄວາມຕ້ອງການທີ່ເປັນບູລິມະສິດ ພາຍຫລັງເກີດໄພພິບັດຂອງພາກລັດ ຫລື ເອກະຊົນ. ຕົວຢ່າງ: ເສັ້ນທາງ ແລະ ຂົວ ອາດຈະເປັນຄວາມຮັບຜິດຊອບຫລັກຂອງລັດຖະບານ ໃນການຟື້ນຟູການເຂົ້າເຖິງ ແລະ ການໄຫວໄປມາຂອງຄົນ, ແຕ່ການດຳລົງຊີວິດຕາມປົກກະຕິເຊິ່ງມີຄວາມສຳຄັນເທົ່າທຽມກັນ ໂດຍທົ່ວໄປແລ້ວແມ່ນເປັນຄວາມຮັບຜິດຊອບຂອງພາກເອກະຊົນ. ດ້ວຍເຫດຜົນດັ່ງກ່າວ, ຄວາມຈຳເປັນ ແລະ ຄວາມຕ້ອງການຂອງທັງພາກລັດ ແລະ ເອກະຊົນ ຄວນຈະລວມເຂົ້າໃນບັນຊີລາຍການບູລິມະສິດ ທີ່ສອດຄ່ອງກັບແຫລ່ງຊັບພະຍາກອນຕ່າງໆທີ່ເປັນໄປໄດ້. ເຖິງຢ່າງໃດກໍ່ຕາມ, ຄວາມຕ້ອງການຂອງພາກລັດ ແລະ ເອກະຊົນສາມາດແກ້ໄຂໄດ້ໂດຍຜ່ານຫລາຍວິທີການ. ຂ້າງລຸ່ມນີ້ໄດ້ອະທິບາຍແຫລ່ງທຶນທີ່ເປັນໄປໄດ້ສຳລັບຂະແໜງການຂອງລັດ ແລະ ເອກະຊົນ.

## ຄວາມຕ້ອງການຂອງພາກລັດ

ຕາມປົກກະຕິ ລັດຖະບານຄວນເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ສິ່ງອຳນວຍຄວາມສະດວກ ແລະ ຊັບສິນຕ່າງໆ ຂອງລັດພາຍຫລັງເກີດໄພພິບັດ. ຂ້າງລຸ່ມນີ້ ແມ່ນແຫລ່ງທຶນທີ່ແຂວງຄຳມ່ວນຄວນພິຈາລະນາ:

1. **ງົບປະມານປົກກະຕິ,** ທາງແຂວງໄດ້ຈັດສັນງົບປະມານປະຈຳປີ ສຳລັບນຳໃຊ້ເຂົ້າໃນວຽກງານສະເພາະ, ໃນກໍລະນີເກີດໄພພິບັດຮຸນແຮງ, ງົບປະມານສຳລັບໂຄງການຕ່າງໆທີ່ມີຢູ່ສາມາດປ່ຽນມານຳໃຊ້ເຂົ້າໃນໂຄງການຟື້ນຟູອັນຮີບດ່ວນຊົ່ວຄາວ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ອາດຕ້ອງໄດ້ຮັບການເຫັນດີ ແລະ ອະນຸມັດຈາກຄະນະກຳມະການປ້ອງກັນແລະຄວບຄຸມແຂວງເສຍກ່ອນ.
2. **ການຈັດສັນງົບປະມານພິເສດເພີ່ມເຕີມ.** ຖ້າຫາກວ່າ ແລະ ເມື່ອແຫລ່ງງົບປະມານທີ່ມີຢູ່ຂອງແຂວງ ອາດຈະບໍ່ພຽງພໍສຳລັບນຳໃຊ້ເຂົ້າໃນກິດຈະກຳຟື້ນຟູອັນຮີບດ່ວນ, ງົບປະມານພິເສດເພີ່ມເຕີມນີ້ອາດຈະຂໍໄດ້ຈາກຂັ້ນສູນກາງ.
3. **ແຜນງານຮ່ວມມືກັບຄູ່ຮ່ວມພັດທະນາສາກົນໃນປັດຈຸບັນ.** ປັດຈຸບັນອາດຈະມີແຜນງານ ແລະ ໂຄງການທີ່ໄດ້ຮັບການສະໜອງທຶນຈາກຄູ່ຮ່ວມພັດທະນາສາກົນ ທີ່ສາມາດໃຫ້ງົບປະມານເພື່ອໃຊ້ເຂົ້າໃນກິດຈະກຳພາຍຫລັງເກີດໄພພິບັດທີ່ໄດ້ກຳນົດໄວ້. ຕົວຢ່າງ: ການກະກຽມທີ່ສາມາດເຈລະຈາກັບຜູ້ໃຫ້ທຶນ ຈາກອົງການສາກົນບໍ່ສັງກັດລັດຖະບານ ເຊັ່ນວ່າ ອົງການອົກສຟາມ,ອົງການບໍລິການບັນເທົາທຸກກາໂຕລິກ , ອົງການແພລນສາກົນ, ອົງການອື່ນໆ, ເພື່ອຊ່ວຍດ້ານທຶນຮອນເຂົ້າໃນບັນດາກິດຈະກຳທີ່ໄດ້ກຳນົດໄວ້ໃນການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ.
4. **ການກູ້ຢືມເງິນໂດຍແຂວງ.** ຖ້າຫາກກົດໝາຍອະນຸຍາດ, ແຂວງສາມາດຄ້ຳປະກັນເງິນກູ້ຕ່າງໆເພື່ອນຳໃຊ້ເງິນເຂົ້າໃນການກໍ່ສ້າງຄືນໃໝ່ຂອງຕົນ. ເຖິງຢ່າງໃດກໍ່ຕາມ, ການຄ້ຳປະກັນດັ່ງກ່າວນີ້ຄວນເຮັດໃນກໍລະນີທີ່ມີການປຶກສາຫາລືລະອຽດເລິກເຊິ່ງ ກັບຄະນະຄຸ້ມຄອງເພື່ອວິໄຈເພີ່ມເຕີມຜົນກະທົບທີ່ອາດເປັນໄປໄດ້ ກ່ຽວກັບ ສະຖານະພາບດ້ານການເງິນຂອງແຂວງໃນອະນາຄົດ.

5. **ເກັບພາສີໃໝ່.** ຕາມທິດສະດີແລ້ວ ລັດຖະບານສາມາດເກັບພາສີໃໝ່ ເພື່ອເປັນທຶນສຳລັບການຟື້ນຟູພາຍຫລັງເກີດໄພພິບັດ, ແຕ່ມາດຕະການດັ່ງກ່າວນີ້ ບໍ່ແມ່ນທາງເລືອກທີ່ດີ. ໃນກໍລະນີທີ່ແຂວງ ຫລື ເມືອງໃດໜຶ່ງທີ່ຖືກທຳລາຍໂດຍໄພພິບັດຈະບໍ່ສາມາດເກັບພາສີເພີ່ມເຕີມໄດ້.
6. **ແຜນງານທີ່ມີໃນປັດຈຸບັນແລະບັນດາຂໍ້ຕົກລົງສຳຮອງກັບຜູ້ໃຫ້ທຶນການຊ່ວຍເຫລືອທາງດ້ານການພັດທະນາ.** ປັດຈຸບັນອາດຈະມີແຜນງານ ແລະ ໂຄງການຈຳນວນໜຶ່ງທີ່ໄດ້ຮັບທຶນຈາກຄູ່ຮ່ວມພັດທະນາສາກົນ ທີ່ສາມາດໃຫ້ທຶນນຳໃຊ້ເຂົ້າໃນກິດຈະກຳຕ່າງໆ ພາຍຫລັງເກີດໄພພິບັດທີ່ໄດ້ກຳນົດໄວ້.

   ສຳລັບແຂວງຄຳມ່ວນ, ແຜນງານພັດທະນາແຂວງຄຳມ່ວນ ແລະ ກອງທຶນຟື້ນຟູພາຍຫລັງເກີດໄພພິບັດ, ສາມາດໃຫ້ທຶນເພື່ອຊ່ວຍຟື້ນຟູໂດຍການໃຫ້ງົບປະມານແກ່ບັນດາບູລິມະສິດຂອງການຟື້ນຟູຈຳນວນໜຶ່ງ. (ບັນດາໂຄງການທີ່ຖືກກຳນົດສຳລັບການໃຫ້ທຶນພາຍໃຕ້ກອງທຶນຟື້ນຟູພາຍຫລັງເກີດໄພພິບັດຕ້ອງໄດ້ອ່ານຄຳແນະນຳ ສຳລັບການໃຫ້ທຶນຂອງກອງທຶນຟື້ນຟູພາຍຫລັງເກີດໄພພິບັດ).

## ຄວາມຕ້ອງການຂອງພາກເອກະຊົນ

ຄວາມຕ້ອງການຂອງພາກເອກະຊົນ ຄວນໄດ້ຮັບການພິຈາລະນາຈາກລັດຖະບານແບບເທົ່າທຽມກັນ ໂດຍສະເພາະຖ້າຫາກວ່າປະຊາກອນຈຳນວນຫລວງຫລາຍໄດ້ຮັບຜົນກະທົບ ແມ່ນຂຶ້ນກັບຂະແໜງດ້ານການດຳລົງຊີວິດ. ລັດຖະບານໃຫ້ການຊ່ວຍເຫຼືອລ້າໂດຍກົງກັບປະຊາກອນຜູ້ທີ່ທຸກຍາກທີ່ສຸດເຊິ່ງສ່ວນໃຫຍ່ໃນດ້ານ:

1. ການຊ່ວຍເຫລືອໃນການສ້າງເຮືອນໂດຍຜ່ານການສະໜອງອຸປະກອນສຳລັບປຸກເຮືອນ;
2. ການຟື້ນຟູດ້ານການດຳລົງຊີວິດ ໂດຍສະເພາະຜູ້ທີ່ມີການດຳລົງຊີວິດທີ່ລຳບາກ ເຊັ່ນ ຊາວກະສິກອນຂະໜາດນ້ອຍ ແລະ ຜູ້ມີອາຊີບຫາປາ ໂດຍສະໜອງແນວພັນໂດຍບໍ່ເສຍຄ່າ, ສະໜອງອຸປະກອນສຳລັບການເຮັດສວນ, ສັດລ້ຽງ ແລະ ອື່ນໆ.
3. ຜູ້ທີ່ມີແຫລ່ງລາຍຮັບແບບບໍ່ຄົງທີ່ ເຊັ່ນ ການຈ້າງແຮງງານລາຍວັນໂດຍໃຫ້ເງິນສົດ ຫລື ການເຮັດວຽກເພື່ອແລກອາຫານ; ແລະ
4. ສ້າງການຈ້າງງານ ໂດຍການຮັບເຂົ້າເຮັດວຽກ ຫລື ສົ່ງເຂົ້າເຮັດວຽກ, ການຝຶກອົບຮົມດ້ານທັກສະ ແລະ ອື່ນໆ.

ເຖິງຢ່າງໃດກໍ່ຕາມ, ສຳລັບຄວາມຕ້ອງການດ້ານການສ້າງບ້ານເຮືອນ ສຳລັບ ຜູ້ທີ່ທຸກຍາກແຕ່ບໍ່ແມ່ນຜູ້ທຸກຍາກທີ່ສຸດ ແລະ ຫົວໜ່ວຍທຸລະກິດເອກະຊົນອື່ນໆ ທີ່ມີການສ້າງລາຍຮັບ (ເຊັ່ນ ຜູ້ທີ່ຢູ່ໃນຂົງເຂດການຜະລິດ, ບໍ່ແຮ່, ພະລັງງານ ຫລື ນ້ຳປະປາ), ການຊ່ວຍເຫລືອສາມາດສະໜອງໃນຮູບການສິນເຊື່ອ ແລະ ໃຫ້ນະໂຍບາຍດ້ານການຫລຸດຜ່ອນການເສຍພາສີ. ແຕ່ຕ້ອງໄດ້ແຈ້ງໃຫ້ຮູ້ວ່າຜູ້ທີ່ໄດ້ຮັບການຫລຸດຜ່ອນພາສີ ແລະ ນະໂຍບາຍດ້ານການເງິນຕ່າງໆແລ້ວນັ້ນ ຈະບໍ່ໄດ້ຮັບເງິນ ຫລື ການຈ່າຍໃຫ້ເງິນເພີ່ມຕື່ມອີກ ຈາກພາກລັດຖະບານ. ປະເພດການຊ່ວຍເຫຼືອຂອງລັດຖະບານໃຫ້ກັບເອກະຊົນມີດັ່ງລຸ່ມນີ້:

1. ການຫລຸດຜ່ອນພາສີໃຫ້ແກ່ຫົວໜ່ວຍທຸລະກິດບໍລິສັດ ແລະ ເຈົ້າຂອງເຮືອນ. ຫົວໜ່ວຍທຸລະກິດ ແລະ ຄົວເຮືອນທີ່ມີການຈ່າຍພາສີແບບມອບເໝົາ ສຳລັບໄລຍະເວລາໃດໜຶ່ງທີ່ແນ່ນອນ, ເຊັ່ນ 2ປີ ຈະເຮັດໃຫ້ເຂົາເຈົ້າສາມາດສ້ອມແປງໄດ້ທັນທີ ນັບແຕ່ເຂົາເຈົ້າໄດ້ຮັບການຄ້ຳປະກັນວ່າ ຈະມີເງິນແຮຈາກການຍົກເວັ້ນພາສີ. ນີ້ແມ່ນນະໂຍບາຍທີ່ມີຕໍ່ຫົວໜ່ວຍທຸລະກິດ ແລະ ຄົວເຮືອນໃນການໃຊ້ຈ່າຍ. ບາງທາງເລືອກພິເສດມີດັ່ງກ່າວ:

- ການຫລຸດຜ່ອນຊົ່ວຄາວ ຫລື ໂຈະການເກັບພາສີມູນຄ່າເພີ່ມ, ອະນຸຍາດການກໍ່ສ້າງ ສໍາລັບການສ້ອມແປງ ແລະ ອື່ນໆ ທີ່ພົວພັນເຖິງຄວາມເສຍຫາຍຂອງເຮືອນ ແລະ ອາຄານ;
- ຫລຸດຜ່ອນພາສີນໍາເຂົ້າຊົ່ວຄາວ ກ່ຽວກັບ ອຸປະກອນທີ່ຈໍາເປັນ ສໍາລັບ ການຟື້ນຟູບໍລິສັດ ແລະ ຟື້ນຟູການດໍາເນີນກິດຈະການ;
- ໂຈະຊົ່ວຄາວ ກ່ຽວກັບ ການເກັບອາກອນຊົມໃຊ້ສິນຄ້າ ແລະ ການບໍລິການ ເຊັ່ນ: ການຫັກຄ່າຫລຸ້ຍຫ້ຽນການກູ້ຢືມຈາກທະນາຄານຂອງລັດເພື່ອສ້າງອາຄານ, ການເຊົ່າທີ່ດິນຂອງລັດບ່ອນທີ່ມີການຕິດຕັ້ງໃນຊ່ວງໄລຍະທີ່ມີການຟື້ນຟູ;
- ບໍ່ເກັບອາກອນຊັບສິນ ກ່ຽວກັບ ເຮືອນ ຫລື ຄ່າຈົດທະບຽນອຸປະກອນທີ່ອາດໄດ້ຮັບຄວາມເສຍຫາຍຈາກໄພພິບັດ, ໂດຍສະເພາະສິ່ງທີ່ບໍ່ມີປະກັນໄພ ຈົນກວ່າສິ່ງເຫລົ່ານັ້ນໄດ້ຮັບການສ້ອມແປງ, ປ່ຽນແທນ ຫລື ກໍ່ສ້າງຄືນໃໝ່.

2. **ການໃຫ້ສິນເຊື່ອ.** ລະບົບສິນເຊື່ອທີ່ມີເງື່ອນໄຂບໍ່ສູງ ເຊັ່ນ: ດອກເບ້ຍຕໍ່າທີ່ມີໄລຍະການຊໍາລະຄືນໃນໄລຍະຍາວ, ຈະ:
    - ເຮັດໃຫ້ຄົວເຮືອນຕ່າງໆ ສາມາດສ້ອມແປງເຮືອນຂອງຕົນໄດ້;
    - ສະໜອງແຫລ່ງທຶນໃຫ້ແກ່ບໍລິສັດຕ່າງໆ ເພື່ອຊື້ວັດສະດຸຕ່າງໆ, ເຄື່ອງຈັກ ແລະ ອຸປະກອນຕ່າງໆທີ່ເຮັດໃຫ້ສາມາດກັບຄືນມາດໍາເນີນກິດຈະການໄດ້ຕາມປົກກະຕິ.

    ສິນເຊື່ອສາມາດສະໜອງຜ່ານຊ່ອງທາງຂອງແຜນງານທີ່ມີໃນປັດຈຸບັນ ຂອງລັດຖະບານ ຫລື ຜ່ານລະບົບທະນາຄານເອກະຊົນທີ່ມີລັດຖະບານເປັນຜູ້ຄໍ້າປະກັນ ທີ່ສາມາດປະຕິບັດໄດ້ ໂດຍຜ່ານນະໂຍບາຍອອກຄໍາສັ່ງ. ຊ່ອງທາງນີ້ລັດຖະບານຈະບໍ່ຈໍາເປັນຕ້ອງມີຄ່າໃຊ້ຈ່າຍ ດ້ານການເງິນເວັ້ນເສຍແຕ່ເປັນຄ່າໃຊ້ຈ່າຍ ສໍາລັບ ການປະສານງານທີ່ພົວພັນເຖິງການຄໍ້າປະກັນ.

3. **ກອງທຶນປັນຜົນ.** ໃນບາງກໍລະນີພິເສດ, ລັດຖະບານອາດບໍ່ມີທາງເລືອກ ໃນການໃຫ້ເງິນປັນຜົນແກ່ບໍລິສັດເອກະຊົນແທນທີ່ຈະເປັນການໃຫ້ການທົດແທນໂດຍກົງ ຫລື ໃຫ້ສິນເຊື່ອ ຫລື ຍົກເວັ້ນພາສີ. ຍົກຕົວຢ່າງ, ລັດຖະບານສາມາດໃຫ້ເງິນປັນຜົນຈາກກອງທຶນໃຫ້ບໍລິສັດເອກະຊົນສາມາດຟື້ນຟູດ້ວຍຕົນເອງໄດ້.

## ບາດກ້າວທີ 3
## ສ້າງຄວາມເຂັ້ມແຂງເງື່ອນໄຂທາງດ້ານການເງິນຂອງຄວາມຕ້ອງການທີ່ເປັນບຸລິມະສິດ ແລະ ສະເໜີແຫລ່ງທຶນ

ການລົງທຶນ ຫລື ຄວາມຕ້ອງການທາງການເງິນ ສໍາລັບ ຄວາມຕ້ອງການທີ່ເປັນບຸລິມະສິດ ທີ່ຈະເປັນສ່ວນໜຶ່ງຂອງແຜນການ ສາມາດສ້າງຂຶ້ນໃນຮູບການດຽວກັນກັບບົດລາຍງານການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ ທີ່ລວມຢູ່ໃນທັງສາມຂະແໜງການ, ໄດ້ແກ່,

- ຂະແໜງການຜະລິດ (ການຟື້ນຟູດ້ານເສດຖະກິດ ແລະ ການພັດທະນາ, ແຍກເປັນຂະແໜງການຍ່ອຍ ເຊັ່ນ: ກະສິກໍາ, ອຸດສາຫະກໍາ, ການຄ້າ, ບໍ່ແຮ່ ແລະ ອື່ນໆ.)
- ຂະແໜງການສັງຄົມ (ການບໍລິການຂັ້ນພື້ນຖານ ແລະ ການປົກປ້ອງສັງຄົມ, ແຍກເປັນຂະແໜງການຍ່ອຍ ເຊັ່ນ: ເຄຫາສະຖານ, ການສຶກສາ, ສາທາລະນະສຸກ ແລະ ອື່ນໆ)
- ຂະແໜງພື້ນຖານໂຄງລ່າງ (ການກໍ່ສ້າງພື້ນຖານໂຄງລ່າງຄືນໃໝ່, ແຍກເປັນຂະແໜງການຍ່ອຍ ເຊັ່ນ: ຂົນສົ່ງ, ນໍ້າປະປາ ແລະ ອື່ນໆ)

- ຂະແໜງການອື່ນໆ ເຊັ່ນ:
  - ການຄຸ້ມຄອງຄວາມສ່ຽງໄພພິບັດ
  - ການຄຸ້ມຄອງສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ
  - ປະຊາກອນທີ່ມີຄວາມຕ້ານທານຕໍ່າ

ຕາຕະລາງດ້ານລຸ່ມນີ້ ສາມາດນຳໃຊ້ສຳລັບເງື່ອນໄຂການລົງທຶນທີ່ອີງໃສ່ບົດລາຍງານ ການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ:

| ຂະແໜງການ | ຊື່ໂຄງການ | ທຶນທີ່ຕ້ອງການສຳລັບການຈັດຕັ້ງປະຕິບັດຕໍ່ປີ (ກີບ) | | | ລວມ | ແຫລ່ງທຶນທີ່ເປັນໄປໄດ້ |
|---|---|---|---|---|---|---|
| | | ປີທີ 1 | ປີທີ 2 | ປີທີ 3 | ປີທີ | |
| ຂະແໜງການຜະລິດ | | | | | | |
| a. ກະສິກຳ | | | | | | |
| b. ບໍ່ແຮ່ | | | | | | |
| c. ອຸດສາຫະກຳ | | | | | | |
| d. ອື່ນໆ | | | | | | |
| ຂະແໜງສັງຄົມ | | | | | | |
| a. ສາທາ | | | | | | |
| b. ສຶກສາ | | | | | | |
| c. ຜັງເມືອງ | | | | | | |
| d. ອື່ນໆ | | | | | | |
| ຂະແໜງພື້ນຖານໂຄງລ່າງ | | | | | | |
| a. ຂົນສົ່ງ | | | | | | |
| b. ພະລັງງານ | | | | | | |
| c. ອື່ນໆ | | | | | | |
| ຂະແໜງການອ້ອມຂ້າງ | | | | | | |
| a. ການຫລຸດຜ່ອນ | | | | | | |
| b. ສິ່ງແວດລ້ອມ | | | | | | |
| c. ອື່ນໆ | | | | | | |

ໝາຍເຫດ ສຳລັບ ຕາຕະລາງທີ 1.

- ສຳລັບຖັນ ແຫລ່ງທຶນທີ່ເປັນໄປໄດ້, ຄວນຈະສະແດງໃຫ້ເຫັນວ່າກອງທຶນຕ່າງໆຈະຖືກນຳໃຊ້ເປັນສິນເຊື່ອ ຫລື ກອງທຶນປັນຜົນ. ຍົກຕົວຢ່າງ, ການຊ່ວຍເຫລືອໃຫ້ແກ່ຂະແໜງພະລັງງານ ຫລື ບໍ່ແຮ່ຂອງບໍລິສັດເອກະຊົນ ສາມາດເຮັດໄດ້ໃນຮູບການໃຫ້ສິນເຊື່ອ ໂດຍທະນາຄານພັດທະນາລາວ. ດັ່ງນັ້ນ, ຈຶ່ງຕ້ອງກຳນົດວ່າ ສິນເຊື່ອ ຈາກທະນາຄານ ພັດທະນາລາວ.
- ຫລາຍເທົ່າທີ່ເປັນໄປໄດ້, ບັນດາໂຄງການຕ່າງໆ ໄດ້ລວມເຂົ້າໃນລາຍການການລົງທຶນຂອງບັນດາໂຄງການບູລິມະສິດທີ່ຄວນຈະມີຕາຕະລາງແຜນວຽກ ຫລື ຢ່າງໜ້ອຍຄວນມີການອະທິບາຍລາຍລະອຽດ ຂອງໜ່ວຍງານຕ່າງໆ ຂອງໂຄງການ.

## ບາດກ້າວທີ 4
# ກໍານົດໂຄງຮ່າງອັນເໝາະສົມສໍາລັບການຈັດຕັ້ງປະຕິບັດແຜນການຟື້ນຟູ

ບັນດາໂຄງການຟື້ນຟູພາຍຫລັງເກີດໄພພິບັດ ເປັນໂຄງການທີ່ມີລັກສະນະຮີບດ່ວນ ແລະ ບັນດາໂຄງການທີ່ຖືກຈັດຕັ້ງປະຕິບັດ ຈະກໍານົດຄວາມຮີບດ່ວນທີ່ຈະເຮັດໃຫ້ສະຖານະການກັບຄືນສູ່ສະພາບເດີມ. ບັນຫາຂ້າງລຸ່ມນີ້ ຕ້ອງໄດ້ຮັບການພິຈາລະນາເຂົ້າໃນຂະບວນການຟື້ນຟູທັງໝົດໂດຍລັດຖະບານ.

1. **ອົງການຈັດຕັ້ງໃໝ່ທຽບເທົ່າກັບອົງການຈັດຕັ້ງທີ່ມີໃນປັດຈຸບັນ.** ຜູ້ຈັດຕັ້ງປະຕິບັດ ຫລື ຜູ້ທີ່ມີສ່ວນກ່ຽວຂ້ອງຕ່າງໆ ມີຄວາມເປັນໄປໄດ້ຫລາຍທີ່ຈະເຂົ້າຮ່ວມໃນຊ່ວງໄລຍະການຟື້ນຟູ ໂດຍສະເພາະພາຍຫລັງເກີດໄພພິບັດ. ຄຽງຄູ່ກັບລັດຖະບານ ແລະ ອໍານາດການປົກຄອງທ້ອງຖິ່ນ, ຄູ່ຮ່ວມພັດທະນາສາກົນທີ່ສໍາຄັນ ເຊັ່ນ: ທະນາຄານໂລກ, ທະນາຄານພັດທະນາອາຊີ, ອົງການສະຫະປະຊາຊາດ, ບັນດາປະເທດຜູ້ໃຫ້ທຶນ ແລະ ອົງການສາກົນບໍ່ສັງກັດລັດຖະບານອາດຈະເຂົ້າຮ່ວມໃນການຟື້ນຟູພາຍຫລັງເກີດໄພພິບັດ. ຕໍ່ເຫດການດັ່ງກ່າວ, ອໍານາດການປົກຄອງແຂວງຄໍາມ່ວນ ຕ້ອງຕັດສິນໃຈວ່າ ເມື່ອສ້າງອົງການຈັດຕັ້ງສະເພາະກິດຂຶ້ນໃໝ່ ເພື່ອປະສານງານ ແລະ ຕິດຕາມການຈັດຕັ້ງປະຕິບັດແຜນການດັ່ງກ່າວ ມີປະສິດທິຜົນສູງກວ່າການນໍາໃຊ້ອົງການຈັດຕັ້ງ ຫລື ພະແນກການທີ່ມີໃນປັດຈຸບັນ.

2. **ການຈັດຊື້.** ຍ້ອນວ່າບັນດາໂຄງການຟື້ນຟູມີລັກສະນະເລັ່ງດ່ວນ, ອາດມີຄວາມຈໍາເປັນຈະຕ້ອງມີການປະເມີນຄືນຂະບວນການຈັດຊື້ ແລະ ລະບຽບການຕ່າງໆຂອງລັດຖະບານ. ການຈັດຊື້ ທີ່ມີໃນປັດຈຸບັນມີລະບຽບພຽງພໍທີ່ຈະເຮັດໃຫ້ການຈັດຕັ້ງປະຕິບັດໂຄງການໄວຂຶ້ນ ຫລືບໍ່? ຖ້າບໍ່, ມີຄວາມເປັນໄປໄດ້ທີ່ຈະຮັບຮອງເອົາລະບຽບການຈັດຊື້ຕ່າງຫາກ ສໍາລັບບັນດາໂຄງການຟື້ນຟູພາຍຫລັງເກີດໄພພິບັດ ຫລືບໍ່? ຖ້າຫາກວ່າລັດຖະບານຕັດສິນໃຈຮັບຮອງເອົາລະບຽບການໃໝ່, ມັນອາດມີຄວາມຈໍາເປັນຕ້ອງເຮັດໃຫ້ລະບຽບການດັ່ງກ່າວກົມກຽວກັບລະບຽບຂອງອົງການຜູ້ໃຫ້ທຶນ ເພື່ອສົ່ງເສີມດ້ານຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ຫລີກລ້ຽງຂໍ້ຂັດແຍ່ງ ໄລຍະຊ່ວງການກວດສອບພາຍຫລັງສິ້ນສຸດໂຄງການ.

3. **ການຕິດຕາມ ແລະ ປະເມີນຜົນ.** ລະບົບການຕິດຕາມ ແລະ ປະເມີນຜົນບັນດາໂຄງການຟື້ນຟູພາຍຫລັງເກີດໄພພິບັດ ອາດຈະມີການປັບປຸງໂດຍການພິຈາລະນາວ່າ ບັນດາໂຄງການເຫລົ່ານີ້ ມີຄວາມຮີບດ່ວນບໍ່ ຖ້າສົມທຽບໃສ່ກັບບັນດາໂຄງການທີ່ໄດ້ຮັບທຶນພາຍໃຕ້ແຜນງານການລົງທຶນຂອງລັດໂດຍທົ່ວໄປ. ລະບົບການຕິດຕາມ ແລະ ປະເມີນຜົນດັ່ງກ່າວອາດຈະເຮັດໃຫ້ກົມກຽວກັບລະບົບການຕິດຕາມ ແລະ ປະເມີນຜົນຂອງຜູ້ໃຫ້ທຶນ, ແຕ່ຄວນຢູ່ພາຍໃຕ້ຂອບການຕິດຕາມ ແລະ ປະເມີນຜົນໂດຍລວມຂອງລັດຖະບານ.

   ແຕ່ເຖິງຢ່າງໃດກໍ່ຕາມ, ບັນດາກິດຈະກໍາທີ່ພົວພັນເຖິງ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ທີ່ໄດ້ຮັບທຶນຈາກງົບປະມານຂອງແຂວງຄໍາມ່ວນ ຄວນໄດ້ຮັບການຈັດຕັ້ງປະຕິບັດຢູ່ພາຍໃຕ້ໂຄງຮ່າງການຈັດຕັ້ງຄຸ້ມຄອງ ແລະການນໍາພາຂອງຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ, ເຊິ່ງເຮັດໜ້າທີ່ເປັນອົງການຊີ້ນໍາລວມ. ພະແນກແຜນການ ແລະ ການລົງທຶນ ຕ້ອງຮັບຜິດຊອບ ດ້ານການປະສານງານການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່.

ນອກຈາກນັ້ນ, ຕ້ອງຈົດຈໍາໄວ້ ຖ້າຫາກວ່າ ແລະ ເມື່ອບັນດາໂຄງການຟື້ນຟູພາຍຫລັງເກີດໄພພິບັດໃນແຂວງຄໍາມ່ວນ ໄດ້ຮັບທຶນຈາກຄູ່ຮ່ວມພັດທະນາສາກົນ ທີ່ຊອກຫາມາໄດ້ໂດຍຈາກກະຊວງແຜນການ

ແລະ ການລົງທຶນ ແລະ ກະຊວງການຕ່າງປະເທດ ໃນນາມລັດຖະບານແຫ່ງ ສປປລາວ, ລະບຽບການໃນການເຮັດສັນຍາ ລະຫວ່າງ ທັງສອງຝ່າຍຕ້ອງ ຮັບປະກັນຜົນສຳເລັດ.

## ບາດກ້າວທີ 5
## **ການຮ່າງແຜນ**

ແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ສາມາດຮ່າງຂຶ້ນ ໂດຍນຳໃຊ້ໂຄງຮ່າງດັ່ງລຸ່ມນີ້:

I. ຄຳນຳຈາກປະທານຄະນະກຳມະການປ້ອງກັນແລະຄວບຄຸມໄພພິບັດຂັ້ນແຂວງ (ຄປຄພບຂ)

II. ຄຳສະແດງຄວາມຮູ້ບຸນຄຸນ

- ພາກນີ້ຄວນຈະກ່າວເຖິງບັນດາກະຊວງ, ອົງການຈັດຕັ້ງ, ອຳນາດການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງພາຍໃນ ແລະ ສາກົນ ແລະ ບຸກຄົນຕ່າງໆ ທີ່ໃຫ້ການຊ່ວຍເຫລືອໃນການຮ່າງແຜນການດັ່ງກ່າວ.

III. ຕາຕະລາງສາລະບານ

- ຊື່ໝວດຕ່າງໆ ຢູ່ໃນແຜນ

IV. ອັກສອນຫຍໍ້

- ລາຍການອັກສອນຫຍໍ້ທີ່ນຳໃຊ້ ແລະ ຄວາມໝາຍຂອງອັກສອນຫຍໍ້, ເພື່ອຄວາມສະດວກໃນການອ້າງອີງ

V. ບົດຄັດຫຍໍ້

- ໃນພາກນີ້ຄວນລວມເອົາການອະທິບາຍ ໂດຍຫຍໍ້ຂອງກິດຈະກຳຕ່າງໆ ທີ່ນຳໄປສູ່ການຮ່າງແຜນການເຊິ່ງປະກອບ ດ້ວຍ:
    - ການອະທິບາຍເຫດການໄພພິບັດທີ່ເກີດຂຶ້ນ: ປະເພດຂອງໄພພິບັດ; ເວລາເກີດໄພພິບັດ ແລະ ວັນທີທີ່ໄພພິບັດເກີດຂຶ້ນ; ໃນບັນດາໄພພິບັດອື່ນໆ.
    - ພື້ນທີ່ທີ່ໄດ້ຮັບຜົນກະທົບ: ບ້ານ, ເມືອງ
    - ການຕອບໂຕ້ຂອງລັດຖະບານ: ທຸກກິດຈະກຳສຸກເສີນ ແລະ ອົງການຈັດຕັ້ງຕ່າງໆທີ່ເຂົ້າຮ່ວມ
    - ການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການທີ່ໄດ້ຮັບການປະເມີນ
- ອະທິບາຍໂດຍຫຍໍ້ເນື້ອໃນຂອງແຜນການ, ໂດຍເນັ້ນໃສ່ການອະທິບາຍເຫດການ ແລະ ຜົນສະທ້ອນ ແລະ ຜົນກະທົບຂອງໄພພິບັດທີ່ມີຕໍ່:
    - ຜູ້ຄົນ (ຜູ້ຍິງ, ເດັກນ້ອຍ, ຜູ້ເຖົ້າ ແລະ ກຸ່ມທີ່ມີຄວາມສ່ຽງອື່ນໆ)
    - ໂຄງລ່າງ ແລະ ການດຳລົງຊີວິດ (ຄວາມເສຍຫາຍ ແລະ ການສູນເສຍຂອງຂະແໜງການຕ່າງໆ)
    - ດ້ານເສດຖະກິດ (ຜົນກະທົບດ້ານເສດຖະກິດມະຫາພາກ)
    - ຍຸດທະສາດໃນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່

- ຄວາມຈຳເປັນ (ໂດຍແຜນງານ ແລະ ໂຄງການໂດຍຂະແໜງການ)
- ແຜນການລົງທຶນ ແລະ ງົບປະມານການເງິນ
- ກົນໄກ ສຳລັບ ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ

## ໝວດທີ I: ຄວາມຮັບຮູ້ທົ່ວໄປ

A. ການຈັດຕັ້ງປະຕິບັດດ້ານເສດຖະກິດ-ສັງຄົມແຂວງຄຳມ່ວນກ່ອນເກີດໄພພິບັດ, ການຄາດຄະເນລ່ວງໜ້າປີທີ່ຈະດຳເນີນໂຄງການ ແລະ ຄາດຄະເນປີທີ່ຈະປະສົບຜົນສຳເລັດ. ສິ່ງເຫຼົ່ານີ້ສາມາດສັງລວມໄດ້ຈາກແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງ ສປປ ລາວ.

- ຂະແໜງການທີ່ມີການຂະຫຍາຍຕົວ-ຂະແໜງການທີ່ມີຄວາມເຂັ້ມແຂງ ຢູ່ແຂວງຄຳມ່ວນ ເຊັ່ນ: ດ້ານກະສິກຳ, ການທ່ອງທ່ຽວ, ພະລັງງານ ແລະ ອື່ນໆ.
- ການຈ້າງງານ-ອັດຕາການວ່າງງານກ່ອນການເກີດໄພພິບັດ ທີ່ຄາດຄະເນໄດ້ຈາກການຈະເລີນເຕີບໂຕດ້ານເສດຖະກິດ.
- ອັດຕາຄວາມທຸກຈົນ - ຈຳນວນຄອບຄົວທຸກຍາກທີ່ມີໃນປັດຈຸບັນ ແລະ ການຄາດຄະເນໃນອະນາຄົດຂອງປະເທດ.

B. ການອະທິບາຍລວມ ກ່ຽວກັບ ຂະໜາດຂອງຜົນກະທົບຈາກໄພພິບັດ

- ພື້ນທີ່ທີ່ໄດ້ຮັບຜົນກະທົບ (ຢູ່ແຕ່ລະເມືອງຂອງແຂວງ)
- ຕົວເລກຜູ້ເສຍຊີວິດຢູ່ແຕ່ລະພື້ນທີ່ (ຢູ່ແຕ່ລະເມືອງຂອງແຂວງ), ແຍກເພດ ແລະ ກຸ່ມອາຍຸ
- ປະເພດໂຄງສ້າງທີ່ໄດ້ຮັບຜົນກະທົບ (ເສັ້ນທາງ, ຂົວ, ເຮືອນ, ພະລັງງານ, ນ້ຳປະປາ ແລະ ອື່ນໆ)
- ຜົນກະທົບດ້ານການດຳລົງຊີວິດ (ຊາວກະສິກອນ, ຜູ້ປະກອບການຂະໜາດນ້ອຍ ແລະ ອື່ນໆ)
- ຜົນກະທົບໂດຍລວມເບື້ອງຕົ້ນ ກ່ຽວກັບເງື່ອນໄຂດ້ານເສດຖະກິດ-ສັງຄົມ ຂອງປະຊາຊົນຢູ່ພື້ນທີ່ຕ່າງໆ ເຊັ່ນ: ດ້ານສາທາລະນະສຸກ ແລະ ໂພສະນາການ, ດ້ານການສຶກສາ, ລາຍຮັບ ແລະ ອື່ນໆ. ໂດຍສະເພາະເຖິງແມ່ຍິງ, ເດັກນ້ອຍ ແລະ ກຸ່ມອື່ນໆທີ່ມີຄວາມສ່ຽງ ເຊັ່ນ: ກຸ່ມຄົນທີ່ຍົກຍ້າຍຖິ່ນຖານ (IDPs)

C. ການຕອບໂຕ້ສຸກເສີນພາຍຫລັງເກີດໄພພິບັດຂອງລັດຖະບານ

- ການຊ່ວຍເຫລືອຂອງລັດຖະບານໂດຍແບ່ງເປັນພື້ນທີ່ (ອາຫານ, ນ້ຳ, ຢາປົວພະຍາດ, ເຄື່ອງນຸ່ງຫົ່ມ, ທີ່ພັກຊົ່ວຄາວ ແລະ ການຊ່ວຍເຫລືອບັນເທົາທຸກອື່ນໆ)
- ຄ່າໃຊ້ຈ່າຍຂອງລັດຖະບານ
- ການຊ່ວຍເຫລືອຈາກຜູ້ໃຫ້ທຶນ (ອົງການຈັດຕັ້ງສາກົນລວມທັງອົງການຈັດຕັ້ງພາຍໃນປະເທດ)
- ຜົນໄດ້ຮັບເບື້ອງຕົ້ນຂອງການຊ່ວຍເຫລືອດັ່ງກ່າວ
- ບັນດາກິດຈະກຳອື່ນໆ ທີ່ປະຕິບັດໂດຍລັດຖະບານ, ຜູ້ໃຫ້ທຶນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ

D. ສະຖານະການປັດຈຸບັນຢູ່ພື້ນທີ່ທີ່ໄດ້ຮັບຜົນກະທົບ

- ສະພາບຂອງຜູ້ປະສົບໄພພິບັດ ແລະ ກິດຈະກຳຕ່າງໆ ທີ່ໄດ້ເຮັດສຳເລັດໂດຍລັດຖະບານ ແລະ ຄູ່ຮ່ວມພັດທະນາອື່ນໆໃນປັດຈຸບັນ

### ພາກທີ II. ການປະເມີນຄວາມເສຍຫາຍ ແລະ ການສູນເສຍ

ອີງຕາມບົດລາຍງານ ການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ, ຜົນກະທົບທົ່ວປະເທດຂອງແຕ່ລະຂະແໜງການໄດ້ຮັບການສະຫລຸບຫຍໍ້ຢູ່ໃນພາກນີ້. ເຊິ່ງມັນມີຄວາມຈຳເປັນຕ້ອງໄດ້ກຳນົດໃນພາກນີ້ວ່າ ລາຍລະອຽດຂອງຄວາມເສຍຫາຍ ແລະ ການສູນເສຍທີ່ໄດ້ຮັບການນຳສະເໜີໃນພາກນີ້ສາມາດເຫັນໄດ້ໃນບົດລາຍງານການວິໄຈ ຄວາມເສຍຫາຍຈາກໄພພິບັດຂັ້ນແຂວງ.

### ພາກທີ III. ແຜນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່

- ວິໄສທັດ, ຈຸດປະສົງ, ຍຸດທະສາດ ແລະ ຫລັກການຄຳແນະນຳ ສຳລັບ ການຟື້ນຟູ ແລະ ກໍ່ສ້າງຄືນໃໝ່.
- ບັນດາໂຄງການທີ່ໄດ້ຮັບການກຳນົດ ສຳລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ໂດຍຂະແໜງການຕ່າງໆ
- ການລົງທຶນ ແລະ ດ້ານການເງິນ
- ການກະກຽມການຈັດຕັ້ງປະຕິບັດ

## ບາດກ້າວທີ 6
## ການອະນຸມັດແຜນຈາກອຳນາດການປົກຄອງແຂວງ ແລະ ການເຜີຍແຜ່ແຜນ

- ແຜນຟື້ນຟູ ແລະ ກໍ່ສ້າງຄືນໃໝ່ຕ້ອງໄດ້ຮັບການອະນຸມັດ ຈາກປະທານຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງ (ຄປຄພບຂ) ແລະ ທ່ານເຈົ້າແຂວງ ແລະ ແຜນດັ່ງກ່າວຄວນໄດ້ຮັບການພິມແລະແຈກຢາຍທົ່ວປະເທດ.